ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 1504 /ກປ

ນະຄອນຫຼວງວຽງຈັນ, ວັນທີ 22 APR 2022

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງກົມກວດກາປ່າໄມ້

- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ສະບັບເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ການຕົກລົງເຫັນດີ ຂອງກອງປະຊຸມ ຄະນະປະຈຳພັກກະຊວງກະສິກຳ ແລະ ປ່າໄມ້, ຄັ້ງວັນທີ 14 ມີນາ 2022.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມກວດກາປ່າໄມ້ ແນໃສ່ຈັດຕັ້ງປະຕິບັດວຽກງານກວດກາ, ດຳເນີນຄະດີຕໍ່ຜູ້ລະເມີດກົດໝາຍ, ລະບຽບການກ່ຽວກັບ ຊັບພະຍາກອນປ່າໄມ້ ແລະ ສ້າງຄວາມເຂັ້ມແຂງ ໃນການປະຕິບັດກົດໝາຍ ໃຫ້ມີປະສິດທິຜົນສູງ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກົມກວດກາປ່າໄມ້ ຂຽນເປັນຕົວອັກສອນຫຍໍ້ວ່າ "**ກກປມ**" ແມ່ນໂຄງປະກອບກົງຈັກ ຂອງກະຊວງກະສິກຳ ແລະ ປ່າໄມ້, ມີພາລະບົດບາດເປັນເສນາທິການໃຫ້ແກ່ ກະຊວງກະສິກຳ ແລະ ປ່າໄມ້ ໃນການກວດກາ ແລະ ດຳເນີນຄະດີຕໍ່ຜູ້ລະເມີດ ກົດໝາຍ, ລະບຽບການກ່ຽວກັບປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ-ສັດປ່າ ແລະ ເຄື່ອງປ່າຂອງດົງ. ຂ.ສ

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມກວດກາປ່າໄມ້ ມີໜ້າທີ່ ດັ່ງນີ້:

1. ປະຕິບັດກົດໝາຍ, ດຳລັດ, ນິຕິກຳອື່ນຂອງຂັ້ນເທິງ ແລະ ນິຕິກຳຕ່າງໆຂອງກະຊວງກະສິກຳ ແລະ ປ່າໄມ້;
2. ຄົ້ນຄວ້າ, ເຊື່ອມຊຶມ ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ; ຄົ້ນຄວ້າ, ສ້າງ ແລະ ປັບປຸງຍຸດທະສາດ, ນິຕິກຳ ກ່ຽວກັບວຽກງານກວດກາ ແລະ ດຳເນີນຄະດີຕໍ່ຜູ້ລະເມີດ ກົດໝາຍ, ລະບຽບການ ກ່ຽວກັບຊັບພະຍາກອນປ່າໄມ້;
3. ໂຄສະນາ, ເຜີຍແຜ່ ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ລະບຽບ, ກົດໝາຍ, ນິຕິກຳອື່ນ ກ່ຽວກັບ ຊັບພະຍາກອນປ່າໄມ້ ໃຫ້ສັງຄົມຮັບຮູ້ຢ່າງກວ້າງຂວາງ ນັບແຕ່ສູນກາງລົງຮອດທ້ອງຖິ່ນ, ຮາກຖານຊົນ ນະບົດເຂດຫ່າງໄກສອກຫຼີກ ຢ່າງທົ່ວເຖິງ;
4. ສ້າງແຜນງານ, ແຜນການ ແລະ ໂຄງການກ່ຽວກັບວຽກງານ ກວດກາ ແລະ ດຳເນີນຄະດີຕໍ່ຜູ້ລະເມີດກົດ ໝາຍ, ລະບຽບການກ່ຽວກັບ ຊັບພະຍາກອນປ່າໄມ້ ເພື່ອສະເໜີລັດຖະມົນຕີ ພິຈາລະນາອະນຸມັດ ພ້ອມ ທັງຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
5. ສຸມທຸກກຳລັງແຮງ ປົກປັກຮັກສາຊັບພະຍາກອນປ່າໄມ້ ເພື່ອປະກອບສ່ວນຊຸກຍູ້ສົ່ງເສີມ ການຜະລິດສະ ບຽງອາຫານໃຫ້ພຽງພໍ ເພື່ອຄໍ້າປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ, ມີວັດ ຖຸດິບປ້ອນໂຮງງານປຸງແຕ່ງ, ມີຜົນຜະລິດສົດ, ສະອາດ ແລະ ປອດໄພ ເພື່ອຊົມໃຊ້ພາຍໃນປ່ຽນແທນ ການນຳເຂົ້າ ແລະ ສົ່ງອອກ;
6. ກວດກາ ກິດຈະການ, ໂຄງການ, ການດຳເນີນທຸລະກິດ ກ່ຽວກັບ ຊັບພະຍາກອນປ່າໄມ້, ຜະລິດຕະພັນ ໄມ້, ເຄື່ອງປ່າຂອງດົງ, ຜະລິດຕະພັນເຄື່ອງປ່າຂອງດົງ, ສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະ ພັນຈາກສັດປ່າ, ກວດກາໄມ້ສົ້ນເຂົ້າ-ສົ້ນອອກ ແລະ ອອກໃບຢັ້ງຢືນ ໄມ້ທີ່ຖືກຕ້ອງຕາມກົດໝາຍ;
7. ຊຸກຍູ້, ຕິດຕາມ ກອງກວດກາປ່າໄມ້ ຂັ້ນແຂວງ, ນະຄອນຫຼວງວຽງຈັນ, ໜ່ວຍງານກວດກາປ່າໄມ້ຂັ້ນ ເມືອງ, ນະຄອນ, ຈຸງານກວດກາປ່າໄມ້ບ້ານ ແລະ ດ່ານກວດກາຊັບພະຍາກອນປ່າໄມ້, ຈັດຕັ້ງນຳພາປະ ຊາຊົນ, ສ້າງບົດບັນທຶກກັບເມືອງ, ນະຄອນ, ບ້ານ ໃນການປົກປັກຮັກສາປ່າໄມ້, ທີ່ດິນປ່າໄມ້, ສັດນໍ້າ ສັດປ່າ ແລະ ເຄື່ອງປ່າຂອງດົງ ເພື່ອສະກັດກັ້ນ ການລັກລອບທຳລາຍຊັບພະຍາກອນປ່າໄມ້ ຕາມທີ່ໄດ້ກຳ ນົດໄວ້ ໃນພາລະບົດບາດ, ໜ້າທີ່, ຂອບເຂດສິດ, ການປະຕິບັດກົດໝາຍ ແລະ ລະບຽບການຕ່າງໆ ຢ່າງ ເຂັ້ມງວດ;
8. ປະສານສົມທົບ ກັບອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ອື່ນ ຂັ້ນສູນກາງ ແລະ ທ້ອງຖິ່ນ, ອົງ ການໄອຍະການປະຊາຊົນ ແລະ ສານປະຊາຊົນ ທຸກຂັ້ນ ທີ່ມີສ່ວນກ່ຽວຂ້ອງ ໃນວຽກງານກວດກາ ແລະ ການດຳເນີນຄະດີ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ຊັບພະຍາກອນປ່າໄມ້;
9. ຊຸກຍູ້, ຕິດຕາມ, ກວດກາ ແລະ ເຂົ້າຮ່ວມການດຳເນີນຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້, ທີ່ດິນປ່າ ໄມ້, ໄຟໄໝ້ລາມປ່າ, ເຄື່ອງປ່າຂອງດົງ, ຜະລິດຕະພັນໄມ້, ສັດນໍ້າ, ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນ ຈາກສັດປ່າ, ນຳເອົາຄະດີທີ່ມີຄວາມຈຳເປັນ ມາດຳເນີນຢູ່ຂັ້ນສູນກາງ ໃຫ້ໄປຕາມລະບຽບກົດໝາຍ, ສົນ ທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ສືບສວນ-ສອບສວນ ເສັ້ນທາງການເງິນ ຂອງຜູ້ກະທຳຜິດ ຢ່າງຮັດກຸມ;

10. ພັດທະນາ ແລະ ນຳໃຊ້ ລະບົບເຕັກໂນໂລຊີ ທີ່ທັນສະໄໝ, ພາບຖ່າຍດາວທຽມ ເພື່ອຕິດຕາມກວດກາ ການຂຸດຄົ້ນໄມ້, ຕັດໄມ້, ບຸກລຸກທີ່ດິນປ່າໄມ້ ແລະ ການທຳລາຍປ່າໄມ້;
11. ຄົ້ນຄວ້ານຳສະເໜີ ແລະ ປັບປຸງກົງຈັກການຈັດຕັ້ງ ພ້ອມທັງກຳນົດຕຳແໜ່ງງານໃຫ້ຄົບຖ້ວນ, ສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ແຜນການບຳລຸງກໍ່ສ້າງ ພະນັກງານ-ລັດຖະກອນຂອງຕົນ ແຕ່ລະໄລຍະ;
12. ສົມທົບ ກັບທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ນຳສະເໜີ ລັດຖະມົນຕີ ເພື່ອແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງຫົວໜ້າ, ຮອງຫົວໜ້າ ກອງກວດກາປ່າໄມ້ ຫຼື ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນແຂວງ, ນະຄອນຫຼວງວຽງຈັນ;
13. ສະເໜີ ສ້າງຕັ້ງດ່ານ ແລະ ຈຸດກວດກາ ຊັບພະຍາກອນປ່າໄມ້ ຢູ່ສະຖານທີ່ ທີ່ມີຄວາມສ່ຽງ ໃນຂອບເຂດທົ່ວປະເທດ;
14. ຄົ້ນຄວ້າ, ພິຈາລະນາຄຳຮ້ອງ, ຄຳສະເໜີຂອງພົນລະເມືອງ ຫຼື ການຈັດຕັ້ງ ກ່ຽວກັບການລະເມີດກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ແລະ ນິຕິກຳອື່ນ ກ່ຽວກັບຊັບພະຍາກອນປ່າໄມ້;
15. ສ້າງຄວາມເຂັ້ມແຂງທາງດ້ານວິຊາສະເພາະ ກ່ຽວກັບວຽກງານກວດກາ, ດຳເນີນຄະດີຊັບພະຍາກອນປ່າໄມ້, ວຽກງານຢັ້ງຢືນຄວາມຖືກຕ້ອງຂອງໄມ້ ໃຫ້ແກ່ເຈົ້າໜ້າທີ່ປ່າໄມ້ ໃນຂອບເຂດທົ່ວປະເທດ;
16. ປະສານສົມທົບ ກັບ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ເພື່ອຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານ ຂອງເຈົ້າໜ້າທີ່ປ່າໄມ້ ກອງກວດກາປ່າໄມ້ຂັ້ນແຂວງ, ນະຄອນຫຼວງວຽງຈັນ ໜ່ວຍງານກວດກາປ່າໄມ້ ຂັ້ນເມືອງ, ນະຄອນ ແລະ ຈຸງານກວດກາປ່າໄມ້ບ້ານ;
17. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການ ທີ່ນຳໃຊ້ງົບປະມານຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານກວດກາປ່າໄມ້ ໃຫ້ໄປຕາມວຽກຈຸດສຸມຂອງກະຊວງ, ວຽກຈຸດສຸມຂອງລັດຖະບານໃນແຕ່ລະໄລຍະ ທັງຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ; ມີການຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ໃຫ້ມີຜົນສຳເລັດ;
18. ຂຶ້ນແຜນ ແລະ ຄຸ້ມຄອງ ການນຳໃຊ້ງົບປະມານ, ພາຫະນະ, ຊັບສົມບັດຕ່າງໆ ແລະ ການກໍ່ສ້າງ-ບຳລຸງພະນັກງານ-ລັດຖະກອນ ພ້ອມທັງ ຕິດຕາມກວດກາ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການຕ່າງໆ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ເພື່ອລາຍງານໃຫ້ຂັ້ນເທິງຊາບແຕ່ລະໄລຍະ;
19. ສົ່ງເສີມບົດບາດ ຍິງ-ຊາຍ ແລະ ຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ປະກອບສ່ວນເຂົ້າໃນວຽກງານຂອງກົມ ກໍ່ຄືໃນຂະແໜງກະສິກຳ ແລະ ປ່າໄມ້;
20. ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງການຊ່ວຍເຫຼືອ ດ້ານທຶນຮອນ ແລະ ແລກປ່ຽນບົດຮຽນ ການກວດກາ ແລະ ດຳເນີນຄະດີ ກ່ຽວກັບຊັບພະຍາກອນປ່າໄມ້ ຕາມການອະນຸມັດຂອງ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້;
21. ເປັນຫ້ອງການປະສານງານ ແຜນງານການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ, ກວດກາການຄ້າໄມ້ ແລະ ສັດນ້ຳ-ສັດປ່າ;
22. ຄຸ້ມຄອງການຄ້າໄມ້ ເພື່ອຈະເປັນຄູ່ຮ່ວມສັນຍາການຄ້າໄມ້ ແບບສະໝັກໃຈ ລະຫວ່າງ ສປປ ລາວ ກັບສະຫະພາບເອີຣົບ;
23. ປະກອບສ່ວນເຂົ້າໃນການພັດທະນາ ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້ ແລະ ໂຮງຮຽນ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ໃຫ້ມີຄວາມເຂັ້ມແຂງ; ຫັນກົດຈະກຳໂຄງການ, ງົບປະມານ, ເຕັກນິກວິຊາ

ການ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ລົງສູ່ບັນດາສູນ, ສະຖານີ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອປະກອບສ່ວນສ້າງສູນ, ສະຖານີ ດັ່ງກ່າວໃຫ້ມີຄວາມເຂັ້ມແຂງ;

24. ສະຫຼຸບ, ລາຍງານ ວຽກງານຂອງຕົນ ໃຫ້ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຊາບ ແລະ ເພື່ອຊີ້ນຳ;
25. ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ.

### ມາດຕາ 4 ຂອບເຂດສິດ

ກົມກວດກາປ່າໄມ້ ມີຂອບເຂດສິດ ດັ່ງນີ້:

1. ນຳສະເໜີ ຮ່າງຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການກ່ຽວກັບວຽກງານກວດກາ ແລະ ດຳເນີນຄະດີຕໍ່ຜູ້ລະເມີດກົດໝາຍ, ລະບຽບການ ກ່ຽວກັບຊັບພະຍາກອນປ່າໄມ້ ຕໍ່ກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາອະນຸມັດ;
2. ອອກຂໍ້ຕົກລົງ, ແຈ້ງການ, ຄຳແນະນຳ, ຄູ່ມືວິຊາການ, ໜັງສືສະເໜີເຖິງຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງ ແລະ ຂະແໜງສາຍຕັ້ງຂອງຕົນຢູ່ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດວຽກງານກວດກາປ່າໄມ້ ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້ ພ້ອມທັງ ກວດກາ, ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
3. ຊີ້ນຳ, ຄຸ້ມຄອງ ຕາມສາຍຕັ້ງທາງດ້ານເຕັກນິກ, ວິຊາການ ໂດຍມີການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງສິດໃນການຕົກລົງບັນຫາ ຢ່າງລະອຽດຈະແຈ້ງ;
4. ສະເໜີ ສ້າງຕັ້ງດ່ານ ແລະ ຈຸດກວດກາຊັບພະຍາກອນປ່າໄມ້ ຢູ່ສະຖານທີ່ ທີ່ມີຄວາມສ່ຽງ ໃນຂອບເຂດທົ່ວປະເທດ;
5. ສະເໜີ ອອກຂໍ້ຕົກລົງແຕ່ງຕັ້ງເຈົ້າໜ້າທີ່ປ່າໄມ້ ລົງເຄື່ອນໄຫວວຽກງານຢູ່ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ແລະ ແຕ່ງຕັ້ງເຈົ້າໜ້າທີ່ປ່າໄມ້ ໄປເຄື່ອນໄຫວວຽກງານຢູ່ຕ່າງປະເທດ;
6. ສະເໜີອອກຂໍ້ຕົກລົງແຕ່ງຕັ້ງເຈົ້າໜ້າທີ່ປ່າໄມ້ ລົງໄປປະຈຳດ່ານ ແລະ ຈຸດກວດກາຊັບພະຍາກອນປ່າໄມ້ ໃນຂອບເຂດທົ່ວປະເທດ;
7. ອອກຄຳສັ່ງເປີດການສືບສວນ-ສອບສວນ, ໝາຍຮຽກ, ໝາຍເຊີນ, ຄຳສັ່ງພາຕົວ, ຄຳສັ່ງກັກຕົວ, ຄຳສັ່ງຄຸມຕົວຢູ່ກັບທີ່, ຄຳສັ່ງຍຶດ ຫຼື ອາຍັດຊັບ, ຄຳສັ່ງປ່ອຍຕົວຜູ້ຖືກກັກຕົວ, ຄຳສັ່ງໂຈະ ຫຼື ຊັດມ້ຽນຄະດີອາຍາ;
8. ສະເໜີ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ອອກຄຳສັ່ງໃຫ້ຢຸດເຊົາການເຄື່ອນໄຫວ ກ່ຽວກັບກິດຈະການປ່າໄມ້ ຫຼື ໂຈະ ໜ້າທີ່ຕຳແໜ່ງຂອງພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຖ້າເຫັນວ່າມີການກະທຳທີ່ລະເມີດກົດໝາຍ;
9. ອຸທອນຄຳສັ່ງບໍ່ສັ່ງຟ້ອງຄະດີ ຂອງຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມ ໄປຍັງອົງການໄອຍະການປະຊາຊົນຂັ້ນເທິງຖັດໄປ ໃນກໍລະນີ ອົງການໄອຍະການຂັ້ນລຸ່ມ ບໍ່ດຳເນີນການສັ່ງຟ້ອງ ຕາມສຳນວນຄະດີຂອງເຈົ້າໜ້າທີ່ປ່າໄມ້;
10. ສະເໜີ ລັດຖະມົນຕີ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ, ພາລະບົດບາດ, ການກຳນົດຕຳແໜ່ງງານ, ການບັນຈຸ, ສັບຊ້ອນ, ຈັດວາງ, ແຕ່ງຕັ້ງ ແລະ ປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທົ່ວກົມກວດກາປ່າໄມ້ ຕາມການແບ່ງຂັ້ນຄຸ້ມຄອງ ທີ່ກົດໝາຍ ແລະ ລະບຽບ ກຳນົດ ຕາມທິດກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິພາບ;

11. ຮຽກໂຮມ ພະນັກງານນຳພາ-ຄຸ້ມຄອງ ແລະ ວິຊາການ ໃນຄວາມຮັບຜິດຊອບຂອງຕົນ ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານສອງແສງວຽກງານ ເປັນແຕ່ລະໄລຍະ, ເຂົ້າຮ່ວມງານວາງສະແດງສິນຄ້າກະສິກຳ ແລະ ກົນຈັກກະສິກຳ ແລະ ຕະຫຼາດນັດ, ຝຶກອົບຮົມ, ສຳມະນາວິຊາການ ແລະ ລົງເຮັດວຽກຢູ່ທ້ອງຖິ່ນ-ຮາກຖານ ຕາມຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານ ຕາມທີ່ໄດ້ກຳນົດໃນລະບຽບການທີ່ກ່ຽວຂ້ອງ;
12. ຄົ້ນຄວ້າ ແລະ ປະກອບຄຳເຫັນ ກ່ຽວກັບການຮ່ວມມື ວຽກງານກວດກາ ແລະ ດຳເນີນຄະດີຊັບພະຍາກອນປ່າໄມ້ ບົນພື້ນຖານກົດໝາຍ ແລະ ລະບຽບການ ທີ່ໄດ້ກຳນົດໄວ້ໃນແຕ່ລະໄລຍະ;
13. ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ຊັບສິນຂອງລັດ ຕາມພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນ ທີ່ກົດໝາຍ ແລະ ລະບຽບການກຳນົດໄວ້;
14. ດຳເນີນຄະດີ ກ່ຽວກັບຊັບພະຍາກອນປ່າໄມ້ ທີ່ເປັນລາຍໃຫຍ່ ພົວພັນກັບຫຼາຍແຂວງ ຫຼື ຫຼາຍພາກສ່ວນ ໂດຍນຳໃຊ້ ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ສະຫຼຸບ ແລະ ປະກອບສຳນວນຄະດີສົ່ງໃຫ້ ອົງການໄອຍະການປະຊາຊົນ ເພື່ອສັ່ງຟ້ອງຂຶ້ນສານຕາມຂະບວນການຍຸຕິທຳ;
15. ປະສານສົມທົບ ກັບອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ອື່ນ ຂັ້ນສູນກາງ ແລະ ທ້ອງຖິ່ນ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທຸກຂັ້ນ ທີ່ມີສ່ວນກ່ຽວຂ້ອງໃນວຽກງານກວດກາ ແລະ ການດຳເນີນຄະດີ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ;
16. ນຳໃຊ້ເຄື່ອງມືສື່ສານ, ພາຫະນະ, ອາວຸດ, ຄ້ອນຕາຍຶດ, ບັດເຄື່ອນໄຫວພິເສດ ຂອງເຈົ້າໜ້າທີ່ປ່າໄມ້, ເຄື່ອງແບບ ແລະ ເຄື່ອງໝາຍ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານ;
17. ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງການຊ່ວຍເຫຼືອດ້ານທຶນຮອນ, ທາງດ້ານເຕັກນິກວິຊາການ, ແລກປ່ຽນບົດຮຽນການກວດກາ ແລະ ດຳເນີນຄະດີ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ, ການສ້າງບົດບັນທຶກການຮ່ວມມື ການຈັດຕັ້ງປະຕິບັດວຽກງານຕ້ານ ແລະ ສະກັດກັ້ນອາຊະຍາກຳຂ້າມຊາດ, ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ຊັບພະຍາກອນປ່າໄມ້ ຕາມການອະນຸມັດຂອງຂັ້ນເທິງ;
18. ປະຕິບັດສິດອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີຜູ້ຊີ້ນຳ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ກົມກວດກາປ່າໄມ້ ມີໂຄງປະກອບກົງຈັກ ດັ່ງນີ້:

1. ພະແນກ ບໍລິຫານ ແລະ ແຜນການ;
2. ພະແນກ ກວດກາປ່າໄມ້ ແລະ ທີ່ດິນປ່າໄມ້;
3. ພະແນກ ກວດກາສັດນ້ຳ, ສັດປ່າ ແລະ ເຄື່ອງປ່າຂອງດົງ;
4. ພະແນກ ສືບສວນ-ສອບສວນ.

**ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ**

ກົມກວດກາປ່າໄມ້ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ຫົວໜ້າກົມ ຈຳນວນ 01 ທ່ານ, ຮັບຜິດຊອບຕໍ່ລັດຖະມົນຕີ ແລະ ຮອງລັດຖະມົນຕີ ຜູ້ຊີ້ນຳ ຂົງເຂດວຽກງານກ່ຽວກັບ ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດວຽກງານຂອງຕົນ;

   ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມທ່ານໃດໜຶ່ງ ຮັກສາການແທນ.

2. ຮອງຫົວໜ້າກົມ ຈຳນວນໜຶ່ງ ຊ່ວຍຫົວໜ້າກົມ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າກົມ ກ່ຽວກັບ ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງຂອງວຽກງານທີ່ຕົນຊີ້ນຳ;

   ຮອງຫົວໜ້າກົມ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດ ໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າກົມ ພາຍຫຼັງກັບມາປະຈຳການ.

3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

   ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໜ້າທີ່ຂອງແຕ່ລະພະແນກ

**ມາດຕາ 7 ໜ້າທີ່ ຂອງພະແນກບໍລິຫານ ແລະ ແຜນການ**

ພະແນກບໍລິຫານ ແລະ ແຜນການ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ຂຶ້ນແຜນຄວາມຕ້ອງການລັດຖະກອນ, ແຜນພັດທະນາ ແລະ ຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ ເຈົ້າໜ້າທີ່ປ່າໄມ້ ໃນຂອບເຂດທົ່ວປະເທດ ທັງໄລຍະສັ້ນ ແລະ ໄລຍະຍາວ ໃນແຕ່ລະປີ ເພື່ອສະເໜີຂັ້ນເທິງ ພິຈາລະນາ;
2. ຄົ້ນຄວ້າ ແລະ ນຳສະເໜີ ການນຳກົມ ພິຈາລະນາ ກ່ຽວກັບການຄັດເລືອກ, ການບັນຈຸຊັບຊ້ອນ, ການຍົກຍ້າຍ, ປະເມີນການຈັດຕັ້ງປະຕິບັດວຽກງານ, ການປະຕິບັດນະໂຍບາຍ ແລະ ປະຕິບັດວິໄນຕໍ່ເຈົ້າໜ້າທີ່ປ່າໄມ້ ໃນຂອບເຂດທົ່ວປະເທດ ເພື່ອນຳສະເໜີຫາ ກົມຈັດຕັ້ງ ແລະ ພະນັກງານ;
3. ຊຸກຍູ້ ບັນດາພະແນກພາຍໃນກົມ, ກອງກວດກາປ່າໄມ້ຂັ້ນແຂວງ, ນະຄອນຫຼວງວຽງຈັນ ແລະ ໜ່ວຍງານກວດກາປ່າໄມ້ຂັ້ນເມືອງ, ນະຄອນ ໃນຂອບເຂດທົ່ວປະເທດ ຄຸ້ມຄອງ, ນຳໃຊ້, ສະຫຼຸບ ງົບປະມານພາຍໃນ, ຕ່າງປະເທດ ເພື່ອລາຍງານ ແລະ ນຳສະເໜີ ຄະນະນຳກົມ ພິຈາລະນາລາຍງານພາກສ່ວນກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ;
4. ຄຸ້ມຄອງ ແລະ ນຳໃຊ້ ເອກະສານ, ຕາປະທັບ, ເຄື່ອງແບບ ແລະ ເຄື່ອງໝາຍ, ເຄື່ອງມືສື່ສານ, ພາຫະນະ, ອາວຸດ, ຄ້ອນຕາຍຶດ, ບັດເຄື່ອນໄຫວພິເສດ ຂອງເຈົ້າໜ້າທີ່ປ່າໄມ້ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານກວດກາປ່າໄມ້ ໃນຂອບເຂດທົ່ວປະເທດ;
5. ຮ່າງໜັງສືສະເໜີ, ຂໍ້ຕົກລົງ, ແຈ້ງການ ແລະ ເອກະສານ ທາງດ້ານບໍລິຫານຕ່າງໆ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງກົມ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາຕາມລະບຽບການ;

6. ຕິດຕໍ່ພົວພັນ, ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອໍານວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວຂອງຄະນະກົມ ໃນການກະກຽມປະຊຸມ, ຕ້ອນຮັບແຂກທີ່ມາພົວພັນ ແລະ ວຽກງານພິທີການອື່ນໆ;
7. ຂຶ້ນແຜນຈັດຊື້, ກໍ່ສ້າງ, ສ້ອມແປງ, ຕຶກອາຄານ, ພາຫະນະ, ອຸປະກອນ, ເຄື່ອງໃຊ້ຫ້ອງການ ແລະ ວັດຖຸອື່ນໆ ທີ່ຢູ່ໃນຄວາມຮັບຜິດຊອບຂອງກົມ;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມການຈັດຊື້ ແລະ ການຊໍາລະຄ່າໃຊ້ຈ່າຍບໍລິຫານອື່ນໆ ພາຍໃນກົມຕາມລະບຽບຫຼັກການ;
9. ເປັນເຈົ້າການ ສະເໜີຈັດຝຶກອົບຮົມສ້າງເປັນຄູຝຶກ ເພື່ອລົງໂຄສະນາ, ເຜີຍແຜ່ນິຕິກໍາ ໃຫ້ເຈົ້າໜ້າທີ່ປ່າໄມ້ ໃນຂອບເຂດທົ່ວປະເທດ ພ້ອມທັງຈັດຕັ້ງການໂຄສະນາເຜີຍແຜ່ບັນດານິຕິກໍາຕ່າງໆ ອອກສູ່ສັງຄົມຢ່າງກວ້າງຂວາງ ນັບແຕ່ສູນກາງຮອດທ້ອງຖິ່ນ;
10. ເປັນໃຈກາງ ໃນການເກັບກໍາ ແລະ ສັງລວມ ການສະເໜີປັບປຸງ ແລະ ສ້າງນິຕິກໍາ ທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດ ວຽກງານກວດກາປ່າໄມ້, ທີ່ດິນປ່າໄມ້, ວຽກງານກວດກາສັດນໍ້າ, ສັດປ່າ, ເຄື່ອງປ່າຂອງດົງ, ວຽກງານການດໍາເນີນຄະດີ ແລະ ການພັດທະນາ ການຈັດຕັ້ງປະຕິບັດລະບົບຄໍ້າປະກັນ ໄມ້ທີ່ຖືກຕ້ອງຕາມກົດໝາຍ;
11. ເຂົ້າຮ່ວມ ກອງປະຊຸມ, ຈັດຝຶກອົບຮົມ, ສໍາມະນາ, ທັດສະນະສຶກສາ ສ້າງຄວາມເຂັ້ມແຂງ ກ່ຽວກັບວຽກງານ ບໍລິຫານ ແລະ ແຜນການ ໃຫ້ເຈົ້າໜ້າທີ່ປ່າໄມ້ ໃນຂອບເຂດທົ່ວປະເທດ;
12. ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າຜັນຂະຫຍາຍ ແຜນຍຸດທະສາດປ່າໄມ້ ແລະ ແຜນດໍາເນີນງານ ວຽກງານກວດກາຊັບພະຍາກອນປ່າໄມ້ ໃຫ້ສອດຄ່ອງ ແທດເໝາະກັບຕົວຈິງແຕ່ລະໄລຍະ;
13. ສ້າງແຜນການ 5 ປີ, ປະຈໍາປີ, 9 ເດືອນ, 6 ເດືອນ ແລະ ປະຈໍາ 3 ເດືອນ ຂອງກົມ ແລະ ບັນດາໂຄງການຕ່າງໆ ທີ່ຂຶ້ນກັບກົມ ແລະ ກອງກວດກາປ່າໄມ້ ໃນຂອບເຂດທົ່ວປະເທດ;
14. ຂຶ້ນແຜນຈັດສັນງົບປະມານ ການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການຕ່າງໆ ໃນແຕ່ລະໄລຍະໃຫ້ຖືກຕ້ອງ ແລະ ແທດເໝາະກັບສະພາບຄວາມເປັນຈິງ ເພື່ອນໍາສະເໜີຂັ້ນເທິງພິຈາລະນາ;
15. ຊຸກຍູ້, ຕິດຕາມ, ຄຸ້ມຄອງ, ສະຫຼຸບຕີລາຄາ ແລະ ການປະເມີນຜົນ ການຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການ ທີ່ຂຶ້ນກັບກົມ ແລະ ກອງກວດກາປ່າໄມ້ ຂັ້ນແຂວງ ເພື່ອລາຍງານໃຫ້ຂັ້ນເທິງ ໃນແຕ່ລະໄລຍະ;
16. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຄຸ້ມຄອງ ແລະ ປະເມີນ ການຈັດຕັ້ງປະຕິບັດວຽກງານ ຂອງຊ່ຽວຊານ ທີ່ຂຶ້ນກັບກົມ ແລະ ກອງກວດກາປ່າໄມ້ ຂັ້ນແຂວງ ໃນຂອບເຂດທົ່ວປະເທດ;
17. ຮ່ວມມື ສອງຝ່າຍ, ຫຼາຍຝ່າຍ, ພາກພື້ນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບ ລັດຖະບານ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອຍາດແຍ່ງການຊ່ວຍເຫຼືອ ດ້ານງົບປະມານ ແລະ ເຕັກນິກວິຊາການເຂົ້າໃນວຽກງານ ຂອງກົມ ແລະ ກອງກວດກາປ່າໄມ້ ໃນຂອບເຂດທົ່ວປະເທດ ຕາມການອະນຸມັດຂອງຂັ້ນເທິງ;
18. ເປັນໃຈກາງ ປະສານງານ, ສະຫຼຸບ, ລາຍງານ ວຽກງານສົ່ງເສີມບົດບາດຍິງ-ຊາຍ ແລະ ຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຂອງກົມ;
19. ຊຸກຍູ້ ບັນດາພະແນກພາຍໃນກົມ, ກອງກວດກາປ່າໄມ້ຂັ້ນແຂວງ ແລະ ໜ່ວຍງານກວດກາປ່າໄມ້ຂັ້ນເມືອງ, ນະຄອນ ໃນຂອບເຂດທົ່ວປະເທດ ເພື່ອຄຸ້ມຄອງ ແລະ ນໍາໃຊ້ ແຫຼ່ງທຶນພາຍໃນ ແລະ ຕ່າງປະເທດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
20. ສ້າງ ແລະ ຄຸ້ມຄອງ ລະບົບ ການເກັບກໍາຂໍ້ມູນ, ສັງລວມ ສະຫຼຸບ, ລາຍງານ, ສ່ອງແສງ ປະຈໍາອາທິດ,

1 ເດືອນ, 3 ເດືອນ, 6 ເດືອນ 9 ເດືອນ, 1 ປີ ແລະ 5 ປີ ກ່ຽວກັບການເຄື່ອນໄຫວວຽກງານ ຂອງພະແນກການອ້ອມຂ້າງ ແລະ ກອງກວດກາປ່າໄມ້ ໃນຂອບເຂດທົ່ວປະເທດ ຕໍ່ຄະນະນໍາຂອງກົມ ຢ່າງເປັນປົກກະຕິ;

21. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 8 ໜ້າທີ່ ຂອງພະແນກກວດກາປ່າໄມ້ ແລະ ທີ່ດິນປ່າໄມ້**

ພະແນກກວດກາປ່າໄມ້ ແລະ ທີ່ດິນປ່າໄມ້ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ ແລະ ນໍາໃຊ້ວິທີການຕ້ານ, ສະກັດກັ້ນ ແລະ ວິທີການກວດກາ ການດໍາເນີນທຸລະກິດປ່າໄມ້, ການດໍາເນີນກິດຈະການປ່າໄມ້ ແລະ ການບຸກລຸກທໍາລາຍປ່າໄມ້ ແລະ ທີ່ດິນປ່າໄມ້;
2. ສ້າງຜູ້ບອກຂ່າວ ເພື່ອຕິດຕາມການລັກລອບບຸກລຸກທໍາລາຍປ່າໄມ້ ແລະ ທີ່ດິນປ່າໄມ້, ລັກລອບຂຸດຄົ້ນ, ຫາ, ຊື້-ຂາຍ, ເຄື່ອນຍ້າຍໄມ້ ແລະ ຜະລິດຕະພັນໄມ້;
3. ຕິດຕາມ, ຮັບການລາຍງານຂໍ້ມູນການລະເມີດກົດໝາຍ ແລະ ນິຕິກໍາ ກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້;
4. ກວດກາ ການຄຸ້ມຄອງ, ນໍາເຂົ້າ ແລະ ຈໍາໜ່າຍ ແລະ ການມີໄວ້ຄອບຄອງ ເຄື່ອງຈັກຂຸດຄົ້ນໄມ້, ກົນຈັກ ແລະ ພາຫະນະລາກແກ່ ແລະ ຂົນສົ່ງໄມ້;
5. ກວດກາລາດຕະເວນ ການລັກລອບ ຂຸດຄົ້ນ, ທໍາລາຍ, ການຈູດປ່າຊະຊາຍ, ເຄື່ອນຍ້າຍ, ຊື້-ຂາຍ ໄມ້ ແລະ ຜະລິດຕະພັນໄມ້ ຕາມສະຖານທີ່ຕ່າງໆ ເຊັ່ນ: ໃນ ແລະ ນອກສາມປະເພດປ່າ, ເຂດທັນປ່ຽນທີ່ດິນປ່າໄມ້, ສະຖານທີ່ຂຸດຄົ້ນໄມ້, ເສັ້ນທາງຂົນສົ່ງໄມ້, ສະໜາມໄມ້, ໂຮງງານອຸດສາຫະກໍາປຸງແຕ່ງໄມ້, ໂຮງງານທີ່ນໍາໃຊ້ໄມ້ເປັນພະລັງງານ, ສາງເກັບມ້ຽນໄມ້, ຮ້ານຂາຍໄມ້ ແລະ ສະຖານທີ່ອື່ນໆ ທີ່ເຫັນວ່າຈໍາເປັນ;
6. ກວດກາບັນດາກິດຈະການປ່າໄມ້, ການເຊົ່າ ຫຼື ສໍາປະທານ ທີ່ດິນປ່າໄມ້, ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ປ່າໄມ້ ແລະ ກວດກາການດໍາເນີນທຸລະກິດກ່ຽວກັບ ປ່າໄມ້ ແລະ ທີ່ດິນປ່າໄມ້;
7. ຕິດຕາມ, ຊຸກຍູ້ ກອງກວດກາປ່າໄມ້ ຂັ້ນແຂວງ, ໜ່ວຍງານກວດກາປ່າໄມ້ ຂັ້ນເມືອງ, ນະຄອນ ໃຫ້ເຄື່ອນໄຫວດໍາເນີນການກວດກາ ການບຸກລຸກທໍາລາຍປ່າໄມ້ ແລະ ທີ່ດິນປ່າໄມ້, ການປະຕິບັດສັນຍາເຊົ່າ ຫຼື ສໍາປະທານທີ່ດິນປ່າໄມ້ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ກວດກາຕາມຈຸດຫຼໍ່ແຫຼມ ແລະ ສະຖານທີ່ອື່ນໆ ແລະ ວຽກງານຈັດຕັ້ງປະຕິບັດ ລະບົບຄໍ້າປະກັນໄມ້ ທີ່ຖືກຕ້ອງຕາມກົດໝາຍ;
8. ເປັນຫ້ອງການປະສານງານ ແຜນງານການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້;
9. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ປະຕິບັດແຜນງານ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ເພື່ອຈະເປັນຄູ່ຮ່ວມສັນຍາການຄ້າໄມ້ ແບບສະໝັກໃຈ ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ;
10. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກວດກາຂໍ້ມູນຕົວຈິງ ດ້ານເອກະສານ ແລະ ວັດຖຸຕົວຈິງ ເພື່ອເປັນບ່ອນອີງ ໃນການພິຈາລະນາ ອອກໃບຢັ້ງຢືນ ໄມ້ທີ່ຖືກຕ້ອງຕາມກົດໝາຍ;
11. ປະສານກັບ ຂະແໜງການທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ພັດທະນາ ແລະ ນໍາໃຊ້ລະບົບເຕັກໂນໂລຊີທີ່ທັນສະໄໝ, ພາບຖ່າຍດາວທຽມ ເພື່ອຕິດຕາມກວດກາການຂຸດຄົ້ນໄມ້, ການຕັດໄມ້, ການບຸກລຸກທີ່ດິນປ່າໄມ້ ແລະ ການທໍາລາຍປ່າໄມ້;
12. ສ້າງ ແລະ ປັບປຸງລະບົບຂໍ້ມູນຂ່າວສານ ກ່ຽວກັບ ການຄ້າໄມ້ໃຫ້ທັນສະໄໝ, ສາມາດແລກປ່ຽນຂໍ້ມູນໃຫ້ເປັນລະບົບ ທັງພາຍໃນ ແລະ ຕ່າງປະເທດ;
13. ສະເໜີຈັດຝຶກອົບຮົມ ສ້າງຄວາມເຂັ້ມແຂງ ກ່ຽວກັບວຽກງານກວດກາປ່າໄມ້ ແລະ ທີ່ດິນປ່າໄມ້, ວຽກ

ງານການກວດກາຢັ້ງຢືນຄວາມຖືກຕ້ອງຂອງໄມ້ ໃຫ້ເຈົ້າໜ້າທີ່ປ່າໄມ້ ໃນຂອບເຂດທົ່ວປະເທດ;

14. ເຂົ້າຮ່ວມ ກອງປະຊຸມ, ຝຶກອົບຮົມ, ສໍາມະນາ, ທັດສະນະສຶກສາ ກ່ຽວກັບວຽກງານກວດກາປ່າໄມ້ ແລະ ທີ່ດິນປ່າໄມ້, ວຽກງານການກວດກາຢັ້ງຢືນຄວາມຖືກຕ້ອງຂອງໄມ້ ຢູ່ພາຍໃນປະເທດ, ພາກພື້ນ ແລະ ສາກົນ;
15. ເປັນເຈົ້າການ ສ້າງແຜນການ ແລະ ສະຫຼຸບສັງລວມ ປະຈໍາເດືອນ, ປະຈໍາງວດ, ປະຈໍາປີ ແລະ ປະຈໍາ 5 ປີ ຂອງພະແນກຕົນ ຢ່າງເປັນປົກກະຕິ;
16. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 9 ໜ້າທີ່ ຂອງພະແນກກວດກາສັດນໍ້າ, ສັດປ່າ ແລະ ເຄື່ອງປ່າຂອງດົງ**

ພະແນກກວດກາສັດນໍ້າ, ສັດປ່າ ແລະ ເຄື່ອງປ່າຂອງດົງ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ ແລະ ນໍາໃຊ້ວິທີການຕ້ານ, ສະກັດກັ້ນ ແລະ ກວດກາ ການລັກລອບລ່າ, ຫາ, ຊື້-ຂາຍ, ນໍາເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນໍາຜ່ານ ແລະ ເຄື່ອນຍ້າຍ, ມີໄວ້ໃນຄອບຄອງສັດ, ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດນໍ້າ ແລະ ສັດປ່າ ແລະ ເຄື່ອງປ່າຂອງດົງ;
2. ຕິດຕາມ ແລະ ຮັບການລາຍງານຂໍ້ມູນການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບສັດນໍ້າ, ສັດປ່າ ແລະ ເຄື່ອງປ່າຂອງດົງ;
3. ປະສານສົມທົບກັບເຈົ້າໜ້າທີ່ອື່ນ ທີ່ກ່ຽວຂ້ອງ ຢູ່ສູນກາງ ແລະ ທ້ອງຖິ່ນ ກວດກາການລັກລອບລ່າ, ຫາ, ຊື້-ຂາຍ, ນໍາເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນໍາຜ່ານ ແລະ ເຄື່ອນຍ້າຍ, ມີໄວ້ໃນຄອບຄອງສັດນໍ້າ ແລະ ສັດປ່າ, ຊາກ, ຊິ້ນສ່ວນຜະລິດຕະພັນຈາກສັດນໍ້າ ແລະ ສັດປ່າ ແລະ ເຄື່ອງປ່າຂອງດົງ ຕາມສະຖານທີ່ຕ່າງໆ ເຊັ່ນ: ຕະຫຼາດ, ໂຮງແຮມ, ຮ້ານອາຫານ, ເສັ້ນທາງ, ເຂດຊາຍແດນ, ເຂດເສດຖະກິດພິເສດ-ເຂດເສດຖະກິດສະເພາະ, ສະໜາມບິນ, ສະຖານີລົດໄຟ ແລະ ສະຖານທີ່ ອື່ນໆ;
4. ກວດກາ ລະບົບການຄຸ້ມຄອງສັດນໍ້າ ແລະ ສັດປ່າ ເຊັ່ນ: ການສໍາຫຼວດ, ວາງແຜນຄຸ້ມຄອງ, ປົກປັກຮັກສາ, ການກໍານົດຖິ່ນທີ່ຢູ່ອາໄສ ແລະ ເຂດອະນຸລັກພັນສັດນໍ້າ ແລະ ສັດປ່າ, ກວດກາ ສຶກສາຄົ້ນຄວ້າ, ຫໍພິພິດຕະພັນສັດ, ການຂະຫຍາຍພັນສັດ, ການລ້ຽງ, ສວນສັດ, ຟາມສັດ, ສູນປິ່ນປົວສັດ, ການນໍາເອົາສັດມາສະແດງ, ການສ້າງສາລະຄະດີສັດ, ການເຊົ່າ ແລະ ກໍາມະສິດໃນການຄອບຄອງສັດ, ຊາກສັດ, ຊິ້ນສ່ວນຜະລິດຕະພັນຈາກສັດນໍ້າ ແລະ ສັດປ່າ;
5. ກວດກາ ການສໍາຫຼວດເພື່ອຂຸດຄົ້ນ ແລະ ການອະນຸມັດແຜນການຂຸດຄົ້ນ, ການຂຸດຄົ້ນ, ການຊື້-ຂາຍ, ການເຄື່ອນຍ້າຍ, ການຂຶ້ນທະບຽນສວນປູກ, ການສ້າງ ແລະ ຄຸ້ມຄອງແຫຼ່ງແນວພັນ ແລະ ກິດຈະການອື່ນທີ່ກ່ຽວຂ້ອງກັບເຄື່ອງປ່າຂອງດົງ ແລະ ພືດປ່າທີ່ໃກ້ຈະສູນພັນ;
6. ກວດກາ ການບຸກລຸກແຫຼ່ງອາຫານສັດນໍ້າ ແລະ ສັດປ່າ, ເຄື່ອງມື ແລະ ອຸປະກອນລ່າສັດ, ອາວຸດລ່າເນື້ອ, ຢາເບື່ອ, ສານພິດ, ທາດເຄມີ, ອຸປະກອນຈັບສັດນໍ້າ, ສັດປ່າ, ໄຟຟ້າຊັອດ, ວິທີການປະມົງທີ່ຕ້ອງຫ້າມ, ອື່ນໆ ທີ່ຜິດກົດໝາຍ;
7. ຊຸກຍູ້, ຕິດຕາມ ກອງກວດກາປ່າໄມ້ຂັ້ນແຂວງ, ໜ່ວຍງານກວດກາປ່າໄມ້ ຂັ້ນເມືອງ, ນະຄອນ ໃນຂອບເຂດທົ່ວປະເທດ ກວດກາ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ, ໂຮງງານໄມ້ປ່ອງ, ໂຮງງານຜະລິດຖ່ານ, ເຕົາເຜົາຖ່ານ ແລະ ໂຮງງານທີ່ນໍາໃຊ້ໄມ້ເປັນພະລັງງານອື່ນໆ;
8. ຊຸກຍູ້, ຕິດຕາມ, ກວດກາ ແລະ ລາຍງານການຈັດຕັ້ງປະຕິບັດ ສົນທິສັນຍາສາກົນວ່າດ້ວຍການຄ້າຂາຍ

ຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ ລວມທັງສົນທິສັນຍາ ແລະ ສົນທິສັນຍາສາກົນອື່ນໆ ທີ່ ສປປ ລາວ ເປັນພາຄີ;

9. ສົມທົບ ກັບຄະນະປະສານງານ ເຄືອຂ່າຍການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ແລະ ກົດໝາຍວ່າດ້ວຍ ປ່າໄມ້ ແລະ ພາກສ່ວນກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຕ້ານ ແລະ ສະກັດກັ້ນອາຊະຍາກຳ ສັດນ້ຳ ແລະ ສັດປ່າ ພາຍໃນ ແລະ ຂ້າມຊາດ;
10. ສ້າງຜູ້ບອກຂ່າວ ເພື່ອຕິດຕາມການລັກລອບລ່າ, ຫາ, ຊື້-ຂາຍ, ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນຳຜ່ານ ແລະ ເຄື່ອນຍ້າຍ ແລະ ການມີໄວ້ໃນຄອບຄອງສັດ, ຊາກສັດ, ຊິ້ນສ່ວນ, ຜະລິດຕະພັນຈາກສັດນ້ຳ ແລະ ສັດປ່າ;
11. ສະເໜີຈັດຝຶກອົບຮົມ ສ້າງຄວາມເຂັ້ມແຂງ ກ່ຽວກັບວຽກງານ ກວດກາສັດນ້ຳ, ສັດປ່າ ແລະ ເຄື່ອງປ່າຂອງດົງ ໃຫ້ເຈົ້າໜ້າທີ່ປ່າໄມ້ ໃນຂອບເຂດທົ່ວປະເທດ;
12. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ສຳມະນາ, ທັດສະນະສຶກສາ ກ່ຽວກັບວຽກງານ ສັດນ້ຳ, ສັດປ່າ ແລະ ເຄື່ອງປ່າຂອງດົງ ຢູ່ພາຍໃນປະເທດ, ພາກພື້ນ ແລະ ສາກົນ;
13. ເປັນເຈົ້າການ ສ້າງແຜນການ ແລະ ສະຫຼຸບສັງລວມ ປະຈຳເດືອນ, ປະຈຳງວດ, ປະຈຳປີ ແລະ ປະຈຳ 5 ປີ ຂອງພະແນກຕົນ ຢ່າງເປັນປົກກະຕິ;
14. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 10 ໜ້າທີ່ ຂອງພະແນກສືບສວນ-ສອບສວນ**

ພະແນກສືບສວນ-ສອບສວນ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ ຄຳຮ້ອງຟ້ອງ, ແຈ້ງຄວາມ, ລາຍງານ, ຄຳສະເໜີ ຂອງພົນລະເມືອງ ແລະ ການຈັດຕັ້ງ ກ່ຽວກັບການລະເມີດກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ, ປະມວນກົດໝາຍອາຍາ; ແລະ ນິຕິກຳທີ່ກ່ຽວຂ້ອງ;
2. ສະເໜີ ອອກຄຳສັ່ງເປີດການສືບສວນ-ສອບສວນ, ໝາຍຮຽກ, ໝາຍເຊີນ, ຄຳສັ່ງພາຕົວ, ຄຳສັ່ງກັກຕົວ, ຄຳສັ່ງຄຸມຕົວຢູ່ກັບທີ່, ຄຳສັ່ງຍຶດ ຫຼື ອາຍັດຊັບ, ຄຳສັ່ງ ປ່ອຍຕົວຜູ້ຖືກສົງໄສ ທີ່ຖືກກັກຕົວ, ຄຳສັ່ງໂຈະ ຫຼື ຊັດມ້ຽນຄະດີ ແລະ ບັນທຶກມອບ-ຮັບ, ກວດກາ, ຄຸ້ມຄອງປົກປັກຮັກສາເຄື່ອງຂອງກາງ ແລະ ຫຼັກຖານໃນລາຍຄະດີ;
3. ເອົາຄຳໃຫ້ການ ຜູ້ຖືກສົງໄສ, ຜູ້ຖືກຫາ, ພະຍານ, ໂຈດທາງແພ່ງ, ຜູ້ຖືກເສຍຫາຍ ໂດຍນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;
4. ສ້າງບົດລາຍງານຕໍ່ອົງການໄອຍະການປະຊາຊົນ ກ່ຽວກັບ ການອອກຄຳສັ່ງເປີດການສືບສວນ-ສອບສວນ, ຄຳສັ່ງຈັບຕົວ, ກັກຂັງພາງ, ປ່ອຍຕົວພາງ, ຕໍ່ກຳນົດຕໍ່ເວລາການສືບສວນ-ສອບສວນ ແລະ ຕໍ່ກຳນົດຕໍ່ເວລາການກັກຂັງພາງ;
5. ຄົ້ນຄວ້າ ແລະ ສະເໜີ ການນຳກົມພິຈາລະນາ ອອກຄຳສັ່ງ ໃຫ້ກອງກວດກາປ່າໄມ້ ຂັ້ນແຂວງ ລົບລ້າງ ການດຳເນີນຄະດີ ທີ່ເຫັນວ່າບໍ່ຖືກຕ້ອງຕາມລະບຽບກົດໝາຍ;
6. ຊຸກຍູ້, ຕິດຕາມ ແລະ ສົມທົບ ກອງກວດກາປ່າໄມ້ຂັ້ນແຂວງ ເພື່ອດຳເນີນການສືບສວນ-ສອບສວນ ຜູ້ຖືກຫາ ແລະ ການປະກອບສຳນວນຄະດີ ສົ່ງໃຫ້ອົງການໄອຍາການ ພິຈາລະນາ;
7. ປະສານສົມທົບກັບ ເຄືອຂ່າຍການບັງຄັບໃຊ້ ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ແລະ ກົດໝາຍວ່າດ້ວຍປ່າໄມ້

ເພື່ອນຳເອົາຜູ້ຖືກຫາ ທີ່ຫຼົບໜີໄປອາໄສຢູ່ຕ່າງປະເທດ ມາດຳເນີນຄະດີ ຕາມກົດໝາຍຂອງ ສປປ ລາວ;

8. ສະຫຼຸບການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີ, ຕິດຕາມການແກ້ໄຂຄະດີ ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ, ພ້ອມທັງຄຸ້ມຄອງ ຮັກສາສຳນວນ-ສຳເນົາຄະດີ ໃຫ້ເປັນລະບົບ ແລະ ຮັບປະກັນຄວາມປອດໄພ;
9. ສະເໜີ ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງ ກ່ຽວກັບວຽກງານການດຳເນີນຄະດີ ກ່ຽວກັບຊັບພະຍາກອນປ່າໄມ້ ໃຫ້ເຈົ້າໜ້າທີ່ປ່າໄມ້ ໃນຂອບເຂດທົ່ວປະເທດ;
10. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ສຳມະນາ, ທັດສະນະສຶກສາ ຕໍ່ກັບວຽກງານ ການດຳເນີນຄະດີກ່ຽວກັບຊັບພະຍາກອນປ່າໄມ້ ຢູ່ພາຍໃນປະເທດ, ພາກພື້ນ ແລະ ສາກົນ;
11. ເປັນເຈົ້າການ ສ້າງແຜນ ແລະ ສະຫຼຸບ ການເຄື່ອນໄຫວວຽກງານຂອງພະແນກ ປະຈຳເດືອນ, ປະຈຳງວດ ປະຈຳປີ ແລະ ປະຈຳ 5 ປີ ຢ່າງເປັນປົກກະຕິ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 11 ຫຼັກການ

ກົມກວດກາປ່າໄມ້ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມຂອງກົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງລະອຽດຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງພັກ-ລັດ; ນຳເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 05 ປີ ຂອງກະຊວງ, ອົງການທຽບເທົ່າກະຊວງ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 12 ແບບແຜນວິທີເຮັດວຽກ

ກົມກວດກາປ່າໄມ້ ມີແບບແຜນວິທີເຮັດວຽກດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້-ຜົນເສຍຂອງວຽກງານ ພ້ອມທັງປະຕິບັດລາຍງານສ່ອງແສງຢ່າງເຂັ້ມງວດ;
3. ເຮັດວຽກຕ້ອງຕິດພັນກັບຮາກຖານ, ຕິດພັນກັບຕົວຈິງ, ຕິດພັນກັບຄະນະພັກ, ຄະນະນຳແຕ່ລະຂັ້ນ ເພື່ອຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາດ້ານດີ-ດ້ານອ່ອນ, ສະຫຼຸບ, ລາຍງານຂໍຄຳເຫັນ ໃນການຈັດຕັ້ງປະຕິບັດແຜນການແຕ່ລະໄລຍະ;
4. ຫົວໜ້າກົມ ມີຄວາມຮັບຜິດຊອບໂດຍກົງຕໍ່ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ, ຮອງຫົວໜ້າກົມ ມີໜ້າ

ທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງຕາມການແບ່ງງານ ແລະ ມອບໝາຍຂອງຫົວໜ້າກົມ;

5. ຫົວໜ້າກົມ ເປັນຜູ້ລົງລາຍເຊັນຕໍ່ບັນດາເອກະສານສຳຄັນ, ໃນເວລາຫົວໜ້າກົມຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມທ່ານໃດທ່ານໜຶ່ງ ຮັກສາການແທນ ແລະ ຜູ້ຮັກສາການແທນຕ້ອງລາຍງານວຽກທີ່ຕົນເອງໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງໃຫ້ຫົວໜ້າກົມຊາບ ພາຍຫຼັງກັບມາປະຈຳການ;
6. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ ຫຼື ປະຈຳປີ ແລະ ປະຕິບັດລະບອບລາຍງານໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນປົກກະຕິ;
7. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 13 ງົບປະມານ ແລະ ຕາປະທັບ**

ກົມກວດກາປ່າໄມ້ ມີງົບປະມານ ແລະ ຕາປະທັບ, ເຄື່ອງແບບ, ເຄື່ອງໝາຍ ແລະ ບັດເຄື່ອນໄຫວພິເສດ ຂອງເຈົ້າໜ້າທີ່ປ່າໄມ້ເປັນສະເພາະຂອງຕົນ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 14 ການຈັດຕັ້ງປະຕິບັດ**

ກົມກວດກາປ່າໄມ້, ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 15 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບຕັ້ງແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມກວດກາປ່າໄມ້ ສະບັບເລກທີ 3063/ກປ, ລົງວັນທີ 30 ມິຖຸນາ 2017.

**ລັດຖະມົນຕີ**

**ປອ. ເພັດ ພົມພິພັກ**